# ທ່ານຕ້ອງການຄວາມຊ່ວຍເຫຼືອ ເລື່ອງໃບບິນຄ່າໄຟຟ້າສຳລັບເຮືອນຂອງທ່ານບໍ? ໂທ (206) 727-8400

**Seattle City Light ພ້ອມຊ່ວຍເຫຼືອທ່ານຜ່ານພົ້ນຊ່ວງການລະບາດຂອງ COVID-19 ແລະ ຈະບໍ່ດັບໄຟຟ້າຂອງທ່ານ ສຳລັບການບໍ່ຊຳລະເງິນໃນລະຫວ່າງຊ່ວງພາວະສຸກເສີນນີ້.**

## ພວກເຮົາສາມາດເຮັດຫຍັງໃຫ້ກັບທ່ານໄດ້ແດ່

ທ່ານບໍ່ຈຳເປັນຕ້ອງເປັນພົນລະເມືອງ ແລະ ທ່ານບໍ່ຈຳເປັນຕ້ອງໃຫ້ເລກປະກັນສັງຄົມສຳລັບຊັບພະຍາກອນເຫຼົ່ານີ້.

- ຊ່ວຍທ່ານສະໝັກຂໍເອົາ Utility Discount Program (ໂຄງການສ່ວນຫຼຸດສຳລັບຄ່າສາທາລະນຸປະໂພກ) ເພື່ອຮັບສ່ວນຫຼຸດ 60% ໃນໃບບິນຄ່າໄຟຟ້າຂອງທ່ານ ແລະ ສ່ວນຫຼຸດ 50% ໃນໃບບິນຄ່ານ້ຳ/ນ້ຳເປື້ອນ/ຂີ້ເຫຍື້ອສຳລັບເຮືອນຂອງທ່ານ ສຳລັບລູກຄ້າທີ່ມີສິດໄດ້ຮັບລາຍຮັບ.
- ເລື່ອນກຳນົດວັນທີທີ່ຕ້ອງຈ່າຍໃບບິນຄ່າໄຟຟ້າຂອງທ່ານ ແລະ ພວກເຮົາຈະເຮັດວຽກຮ່ວມກັບທ່ານເພື່ອສ້າງແຜນການຊຳລະເງິນ.
- ຕອບຄຳຖາມກ່ຽວກັບໃບບິນຄ່າໄຟຟ້າຂອງທ່ານ.
- ແບ່ງປັນເຄັດລັບການປະຢັດພະລັງງານ ເພື່ອປະຢັດເງິນໃນໃບບິນຂອງທ່ານ.

**ສ່ວນຫຼຸດ**

**60%**

**50%**

## ມີການບໍລິການແປພາສາໃຫ້

- ເມື່ອທ່ານໂທຫາ, ທ່ານອາດຈະຕິດຕໍ່ບຸກຄົນຕົວເປັນໆ ຫຼື ຂໍ້ຄວາມສຽງໄດ້.
- ຖ້າມີຄົນຮັບສາຍ, ໃຫ້ບອກພາສາທີ່ທ່ານຕ້ອງການເປັນພາສາອັງກິດ.
- ຖ້າທ່ານຕິດຕໍ່ຂໍ້ຄວາມສຽງຂອງພວກເຮົາ ຫຼື ອີເມວຫາພວກເຮົາ, ກະລຸນາແຈ້ງໃຫ້ພວກເຮົາຮູ້ຊື່, ເບີໂທລະສັບຂອງທ່ານ, ພາສາທີ່ທ່ານຕ້ອງການເປັນພາສາອັງກິດ ແລະ ວ່າທ່ານຕ້ອງການການຊ່ວຍເຫຼືອຫຍັງແດ່.



## ຕິດຕໍ່ພວກເຮົາ

**CUSTOMER ADVOCACY TEAM**
**(ທີມງານສະໜັບສະໜູນລູກຄ້າ)**
**ໂທ: (206) 727-8400**
**8 ໂມງເຊົ້າ–5 ໂມງແລງ, ວັນຈັນ–ວັນສຸກ**
**ອີເມວ: CityLightHelp@seattle.gov**

**ລູກຄ້າທຸລະກິດຂະໜາດນ້ອຍ:** ໂທ (206) 256-5200 ເພື່ອຮຽນຮູ້ກ່ຽວກັບທາງເລືອກການຊຳລະເງິນ ແລະ ການປະເມີນພະລັງງານຟຣີທາງເລືອກສຳລັບທຸລະກິດຂອງທ່ານ.

Seattle City Light

seattle.gov/light